ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lan Xang Literature

## Lecture 16:
## The Story of Nangtangon (Con.)

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີລ້ານຊ້າງ
**ລະຫັດ:** 0907409
**ບົດທີ 6:** ໜັງສືເລື່ອງ: "ນາງແຕງອ່ອນ" (ຕໍ່)
**ຜູ້ບັນຍາຍ:** ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 2
**ສົກຮຽນ:** 2022-2023

ເວລາ: 90 ນາທີ

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ສະເໜີຕົວລະຄອນສິນທຳ<br>- ສະເໜີຕົວລະຄອນອະທຳ<br>- ສີລະປະການປະດິແຕ່ງ</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ສະເໜີຕົວລະຄອນສິນທຳ<br>- ສະເໜີຕົວລະຄອນອະທຳ<br>- ສີລະປະການປະດິແຕ່ງ</td><td>ຄຳຖາມຫຼັກ (Questions):<br>1) ຕົວລະຄອນສິນທຳມີໃຜແດ່?<br>2) ຕົວລະຄອນອະທຳມີໃຜແດ່?<br>3) ສີລະປະການແຕ່ງເປັນແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງຕົວລະຄອນແຕ່ລະຝ່າຍ ແລະ ສີລະປະການແຕ່ງຂອງເລື່ອງ.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງຕົວລະຄອນແຕ່ລະຝ່າຍ ແລະ ສີລະປະການແຕ່ງຂອງເລື່ອງ.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ (Evidence)</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຣວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
</table>

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

- **ສື່ການສອນມີ:**
  ປຶ້ມຕຳລາວິຊາວັນນະຄະດີລ້ານຊ້າງ, ປຶ້ມໜັງສືເລື່ອງ ນາງແຕງອ່ອນ, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD.
- **ກິດຈະກຳການຮຽນ**

**ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງຄວາມເປັນມາຂອງເລື່ອງ "ນາງແຕງອ່ອນ" ໂດຍຫຍໍ້.
- **ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 6**

**ໜັງສືເລື່ອງ: "ນາງແຕງອ່ອນ"**

**6.2 ສະເໜີຕົວລະຄອນສິນທຳ** (30 ນາທີ)

<u>**ກິດຈະກາ 1:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ຕົວລະຄອນສິນທຳມີໃຜແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

**1) ພະຍາໂກສີ ແລະ ນາງສີສຸພະລັດຕະນະ**

ທັງສອງແມ່ນພໍ່ແມ່ຂອງຈັກກິມະຫາວົງ, ເປັນພະຍາປົກຄອງເມືອງໂກສີຜູ້ທີ່ມີຈິດໃຈກວ້າງຂວາງ, ເຮັດໃຫ້ບ້ານເມືອງຢູ່ເຢັນເປັນສຸກ, ປະຊາຊົນລາຊະດອນບໍ່ມີສິ່ງເດືອດຮ້ອນ ແລະ ນຳພາສ້າງບ້ານແປງເມືອງໃຫ້ຢູ່ເຢັນເປັນສຸກ.

**2) ຕົວລະຄອນຈັກກິມະຫາວົງ**

ເປັນຕົວແທນໃຫ້ແກ່ອຳນາດສັງຄົມສັກດີນາ ແຕ່ວ່າເປັນຕົວແທນທີ່ໂງ່ຈ້າ, ຂາດການຄົ້ນຄິດ, ເປັນຄົນເຊື່ອຄວາມເບົາ ເອົາຄວາມງ່າຍບໍ່ສະຫຼາດ, ບໍ່ຄົ້ນຄິດພິນິດໄຕ່ຕອງຫາເຫດຜົນ, ເອົາການຫຼິ້ນເປັນໃຫຍ່, ບໍ່ສົນໃຈນຳວຽກບ້ານການເມືອງ, ໃຊ້ອາລົມຕັດສິນບັນຫາ.

**ອັນດີ:** ເມື່ອຮູ້ວ່າຖືກໃສ່ຮ້າຍກໍຈັບສັດຕູໄປຂັງ, ມັກຄວາມເປັນທຳແຕ່ເບິ່ງບັນຫາບໍ່ລະອຽດ, ຮັບຜິດ ຊອບຕໍ່ສິ່ງທີ່ຕົນເຮັດ, ມີພອນສະຫວັນໃນການຕໍ່ໄກ່, ຄ້ອງຊ້າງສະນັ້ນຈຶ່ງເຮັດໃຫ້ນາງແຕງອ່ອນຜູ້ສັດຊື່ບໍລິສຸດໄດ້ຮັບຄວາມທຸກທໍລະມານ. ບັນຫານີ້ເປັນສິ່ງຢັ້ງຢືນໃຫ້ເຫັນວ່າ ອຳນາດການປົກຄອງເມືອງໂກສີໃນຄາວນັ້ນແມ່ນບໍ່ມີຄວາມຍຸຕິທຳ.

**3) ຕົວລະຄອນນາງແຕງອ່ອນ**

ນາງ ແຕງອ່ອນ ເປັນລູກສາວຂອງພະຍາກຸມພິນ ແລະ ນາງ ທອງແດງຢູ່ເມືອງບາດານ. ນາງເປັນຍິງສາວສວຍສົດງົດງາມ ພໍ່ຈຶ່ງເຮັດຜາສາດເສົາດຽວໃຫ້ຢູ່ຈົນພະຍາຈັກກີ ມະຫາວົງຝັນເຫັນ ແລະ ໄປສູ່ຂໍເອົານາງມາເປັນເມຍ, ເມື່ອມາຢູ່ບໍ່ພໍເທົ່າໃດກໍຖືກກົດຂີ່ຂົ່ມເຫັງ ຕົກທຸກໄດ້ຍາກຖືກພະຍາຂັບໄລ່ໄສໜີ ແລະ ເຕະຕີຢ່າງທໍລະມານ. ນາງໄດ້ຊັດເຊພະເນຈອນໄປດ້ວຍຄວາມອົດທົນນາງເປັນຕົວແທນໃຫ້ແກ່ເພດຍິງໃນສະໄໝນັ້ນ. ມີຄວາມອົດທົນຜ່ານຜ່າອຸປະສັກທີ່ເກີດຂຶ້ນ, ນາງມີນ້ຳໃຈຊື່ສັດບໍລິສຸດຕໍ່ຜົວ ແລະ ຄອບຄົວຂອງນາງ, ບໍ່ລືມເຊື້ອຕະກູນຂອງຕົນ, ມີສິນທຳປະຈຳໃຈ, ບໍ່ອວດອົ່ງທະນົງຕົວ, ຮັກລູກຮັກຜົວ, ມີວາມບໍລິສຸດໃຈ, ມີຄວາມເອື້ອເຟື້ອເພື່ອແຜ່ເຊິ່ງສະແດງອອກໃນເວລາແມ່ໄອຍາກາເອົານາງທັງຫ້າມາຖວາຍໃຫ້ພະຍາ ນາງພໍໃຈໃນສິ່ງທີ່ຜົວກະທຳ. ເຖິງວ່ານາງຈະຖືກກ່າວຫາສິ່ງບໍ່ດີ ແລະຖືກທຸບຕີ ແຕ່ນາງກໍ່ຮັກຜົວ ແລະ ເສນາອາມາດທັງຫຼາຍທີ່ໃສ່ຮ້າຍປ້າຍສີນາງ ເຊິ່ງສະແດງອອກໃນເລື່ອງກ່ອນຈະໜີນາງກໍໄດ້ເອີ້ນສັ່ງລາບອກສອນສິ່ງທີ່ດີໃຫ້ແກ່ຊາວວັງທັງຫຼາຍ ແລະ ເອີ້ນສັ່ງລາຜາສາດລາດຊະວັງຕ່າງໆໃນເມືອງ, ຍ້ອນຄວາມດີຂອງນາງສຸດທ້າຍນາງກໍກັບຄືນມາຢູ່ນຳພະຍາປົກຄອງບ້ານເມືອງຄືເກົ່າ.

ຈາກຕົວລະຄອນນາງແຕງອ່ອນ ໄດ້ເຮັດໃຫ້ເຫັນສະພາບສັງຄົມໃນສະໄໝນັ້ນ ມີການຍາດແຍ່ງແຂ່ງດີກັນເພື່ອຍຶດຕຳແໜ່ງ, ເອົາອຳນາດເງິນຄຳຕັດສິນທຸກການເຄື່ອນໄຫວ ແລະ ການພົວພັນຢູ່ໃນສັງຄົມ. ອຳນາດຂອງເງິນຄຳໄດ້ເຮັດໃຫ້ຈິດໃຈຂອງຄົນປ່ຽນໄປ, ຈິດໃຈຄົນທີ່ເຄີຍຈົ່ງຮັກພັກດີຕໍ່ນາງແຕງອ່ອນໃນເມື່ອກ່ອນ ບັດນີ້ໄດ້ກາຍເປັນສິ່ງທີ່ມືວໝອງ ສະນັ້ນ ນາງແຕງອ່ອນເຖິງຈະຊື່ສັດ ແລະ ມີສິນທຳປານໃດກໍຕາມກໍບໍ່ອາດລົງຊີວິດຢູ່ໄດ້ ເຊິ່ງມັນເປັນການຂັດກັບຄຳເວົ້າທີ່ວ່າ: “ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ” ແຕ່ເຖິງຢ່າງໃດກໍຕາມຄວາມຈິງກໍຕ້ອງເປັນຄວາມມຈິງ, ສິນທຳຍາມໃດກໍຕ້ອງຊະອະທຳຢູ່ສະເໝີ.

**4) ຕົວລະຄອນກຸມພາ, ກຸມພີ (ກໍລະກັນ)**

ຕົວລະຄອນທັງສອງນີ້ແມ່ນອ້າຍ ແລະ ນ້ອງຂອງນາງແຕງອ່ອນ ເຂົາເຈົ້າມີຄວາມຮັກແພງກັນບໍ່ລືມຊາດຕະກຸນດຽວກັນ ສະແດງອອກເມື່ອເຫັນນາງແຕງອ່ອນຕົກທຸກໄດ້ຍາກ ເຂົາເຈົ້າກໍໄດ້ຊ່ວຍເຫຼືອເຊິ່ກັນ ແລະ ກັນ ແລະກໍມີຄວາມຄຽດແຄ້ນຕໍ່ເມືອງຜົວຂອງນາງແຕງອ່ອນ, ເຂົາເຈົ້າໄດ້ຊ່ວຍເຫຼືອກັນຕໍ່ສູ້ໂດຍບໍ່ປະຖິ້ມກັນ.

**5) ຕົວລະຄອນພະອິນ ແລະ ນາງເທບພະລີລາ**

ແຕ່ງຂຶ້ນເພື່ອຊ່ວຍຕົວລະຄອນສິນທຳ ເຮັດໃຫ້ຕົວລະຄອນສິນທຳຢູ່ໃນເລື່ອງໄດ້ເຄື່ອນໄຫວ ເຊິ່ງສະແດງອອກໃນເລື່ອງຄື: ເຮັດໃຫ້ຈັກກີມະຫາວົງຫຼົງປ່າ, ເທບພະລີລາ ລ້ຽງທ້າວ ເກດສຸລິຍົງຍານ ພ້ອມທັງສອນວິຊາອາຄົມໃຫ້. ພະອິນໄດ້ບອກໃຫ້ທ້າວໄປນຳເອົາແມ່ທີ່ຖືກຍັກລັກເອົາໄປ ແລະ ໄດ້ເອົານ້ຳເຕົ້າແກ້ວມາຫົດເອົາສອງອ້າຍນ້ອງທີ່ຕາຍໄປນັ້ນໃຫ້ຄືນມາ, ເນລະມິດສວນດອກໄມ້ໃຫ້ນາງແຕງອ່ອນໄດ້ບູຊາອ້າຍ ແລະ ສຸດທ້າຍກໍເນລະມິດໃຫ້ທ້າວເກດສຸລິຍົງຍານໄດ້ນັ່ງເມືອງ ຈາກນັ້ນພະອິນ ແລະ ເທບພະລີລາກໍໄດ້ລາເມືອ.

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**6) ຕົວລະຄອນຄຳເຜືອຜົ້ນ, ຄຸນຄານ, ທ້າວເຄັ່ງ ແລະ ທ້າວທຸມ**

ຕົວລະຄອນທັງສີ່ນີ້ເປັນຕົວລະຄອນທີ່ໃກ້ສິດຕິດແທດກັບພະຍາຈັກກີມະຫາວົງ ເຊິ່ງເປັນຜູ້ນຳພາທ່ຽວຕ່າງໆ, ໄປຕໍ່ໄກ່, ຄ້ອງຊ້າງ, ເປັນຜູ້ເຫັນສະພາບຂອງນາງແຕງອ່ອນ ແລະ ນຳເອົານາງແຕງອ່ອນມາໃຫ້ຈັກກີມະຫາວົງ. ເມື່ອເວລາຂັບໄລ່ນາງ ແຕງອ່ອນໜີທັງສີ່ຄົນນີ້ກໍໄດ້ອ້ອນວອນຂໍນຳພະຍາຊ່ວຍນາງແຕງອ່ອນ ພ້ອມທັງເລົ່າເລື່ອງປຽບທຽບກັບເລື່ອງຈັກກີມະຫາວົງ ເພື່ອກະຕຸ້ນຈິດໃຈໃຫ້ຄິດຖີ່ຖ້ວນ ແລະ ເມື່ອຈັກກີມະຫາວົງຮູ້ຄວາມຈິງທຸກຢ່າງແລ້ວກໍໄດ້ແຕ່ງຕັ້ງຕຳແໜ່ງໃຫຍ່ໃຫ້ທ້າວທັງສີ່ເຊິ່ງ ເປັນຜູ້ເຕືອນສະຕິຫຼັກໝັ້ນຂອງຈັກກີມະຫາວົງ.

**7) ຕົວລະຄອນທ້າວເກດສຸລິຍົງຍານ**

ທ້າວ ເກດສຸລິຍົງຍານ ເປັນຕົວແທນໃຫ້ແກ່ບຸກຄົນອຸດົມຄະຕິຄື: ມີຄວາມເກັ່ງກ້າສາມາດ, ມີຄວາມອົດ ທົນຜ່ານຜ່າຂໍ້ຫຍຸ້ງຍາກ, ຊື່ສັດຕໍ່ເຊື້ອຕະກູນ ແລະ ເຮັດວຽກໂດຍບໍ່ຮຽກຮ້ອງຄຸນຄ່າຕອບແທນ. ແຕ່ຍ້ອນຄວາມເຫັນດີເຫັນຊອບຂອງປະຊາຊົນ ພ້ອມນີ້ທ້າວຍັງເປັນຜູ້ແກ້ໄຂຂໍ້ຂັດແຍ້ງຢູ່ໃນສັງຄົມ ແລະ ທ້າວຍັງໄດ້ພົບຄວາມຫຍຸ້ງຍາກຄື: ເກີດຈາກທ້ອງແມ່ມາກໍຖືກແມ່ໄອຍາກາທຳເຂັນເອົາທ້າວໃສ່ໄຫຝັງໄວ້ນອກເມືອງ. ນາງເທບລີລາໄດ້ເອົາໄປລ້ຽງພ້ອມທັງສັ່ງສອນສາດຕະສິນອາຄົມໃຫ້ ແລະ ທ້າວກໍໄດ້ຕໍ່ສູ້ກັບຍັກຕ່າງໆເພື່ອນຳເອົາແມ່ມາໃຫ້ພໍ່ຈົນໄດ້ຮັບໄຊຊະນະ ແລະ ຍ້ອນຄວາມດີດັ່ງກ່າວສຸດທ້າຍທ້າວກໍໄດ້ເປັນຜູ້ປົກຄອງເມືອງແທນພໍ່.

**8) ຕົວລະຄອນນາງປະທຸມມາ, ນາງຢາດຟ້າ, ນາງອິນທອງ ແລະ ນາງຈັນທອນ**

ຕົວລະຄອນທັງສີ່ເປັນຕົວລະຄອນປະກອບ. ນາງ ປະທຸມມາ ແມ່ນຍັກຫັດຖະຈັກ ໄດ້ມາຈາກດອກບົວ ແລະ ໄດ້ຕົກລົງກັບນາງ ສູນທອນ ຜູ້ເປັນເມຍວ່າເອົານາງ ປະທຸມມາໃຫ້ເປັນລູກ ແລະ ໄດ້ລ້ຽງດູຢ່າງເອົາໃຈໃສ່.ຈາກນັ້ນ, ກໍໄປລັກເອົານາງ ອິນທອງເປັນລູກສາວຂອງພະຍາຈັກຂິນຢູ່ເມືອງຈັກຂິນ, ໄປລັກເອົານາງ ຢາດຟ້າລູກສາວຂອງພະຍາຊົມພູຢູ່ເມືອງຊົມພູເພື່ອເອົາມາເປັນເພື່ອນລູກສາວ, ຈາກນັ້ນ ກໍໄປລັກເອົານາງຈັນທອນເຊິ່ງເປັນລູກສາວຂອງພະຍາເມືອງຍັກສາລະວັນ. ທັງສີ່ຕົວລະຄອນນີ້ແມ່ນລູກຂອງຍັກແຕ່ກໍມີຈິດໃຈຄືກັບມະນຸດ ແລະ ທ້າວເກດສຸລິຍົງຍານ ກໍໄດ້ເອົານາງທັງສີ່ນີ້ຂຶ້ນມາເປັນເມຍ.

**6.3 ສະເໜີຕົວລະຄອນອະທຳ** (15 ນາທີ)

<u>**ກິດຈະກາ 2:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ຕົວລະຄອນອະທຳມີໃຜແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

**1. ຕົວລະຄອນແມ່ໄອຍາກາພ້ອມດ້ວຍບໍລິວານ**

ແຕ່ກ່ອນແມ່ໄອຍາກາ ໄດ້ເປັນຜູ້ທີ່ຮັ່ງມີ ເປັນເສດຖີໃນເມືອງ. ເມື່ອຜົວຕາຍເງິນຄຳກໍຄ່ອຍໝົດໄປ ຈາກນັ້ນແມ່ໄອຍາກາກໍໄດ້ວາງແຜນຕ່າງໆໄວ້ຄື: ທຳອິດໄດ້ວາງແຜນໃຫ້ລູກສາວທັງຫ້າຂອງນາງໄປເປັນເມຍຂອງພະຍາຈັກກີມະຫາວົງ ໂດຍເອົານາງທັງຫ້າໄປຖວາຍໃຫ້ພະຍາ. ເມື່ອໄດ້ເປັນເມຍພະຍາແລ້ວ ແມ່ໄອຍາກາກໍໄດ້ວາງແຜນທຳລາຍ

ນາງແຕງອ່ອນ ເຊິ່ງເປັນເມຍຫຼວງເພື່ອຫວັງໃຫ້ລູກສາວຂອງຕົນເປັນໃຫຍ່ ຈຶ່ງໄດ້ເອົາແຂ້ມາປ່ຽນແທນເອົາລູກຂອງນາງແຕງອ່ອນ ໂດຍສັບສໍ່ຕ່າງໆນາໆຕໍ່ພະຍາພ້ອມທັງເອົາເງິນຄຳອອກມາຊື້ຈ້າງພວກເສນາອາມາດ, ແສນເມືອງ ແລະ ສາວໃຊ້ທຸກຄົນ ໃຫ້ປິດປາກບໍ່ໃຫ້ພະຍາຮູ້ ແລະ ສັບສໍ່ໃຫ້ພະຍາຂັບໄລ່ນາງແຕງອ່ອນໜີ ແລະ ແມ່ໄອຍາກາ ກໍໄດ້ຕາມຄວາມປະສົງຄື: ໄດ້ມີໜ້າມີຕາ, ເປັນຜູ້ວາງແຜນຄຸມຄອງຕ່າງໆ.

**2. ຕົວລະຄອນຍັກທັດຖະຈັກ, ຍັກຄົດສະລຶງ, ຍັກທັດສະກຶດ**

ຍັກທັດຖະຈັກ ເປັນຍັກທີ່ປົກຄອງເມືອງບັນທະພານມີມະເຫສີຊື່ວ່ານາງສູນທອນ, ມີນ້ອງຊາຍຊື່ຍັກຄົວສະລຶງ ແລະ ຍັກທັດສະກຶດ, ນ້ອງຊາຍທັງສອງນີ້ ແມ່ນຜູ້ທ່ຽວຊອກກິນມະນຸດ. ຍັກທັດຖະຈັກບໍ່ມີລູກຈຶ່ງໄດ້ນາງປະທຸມມາຈາກດອກບົວມາເປັນລູກ ຈາກນັ້ນ ກໍໄດ້ໄປຊອກລັກເອົາລູກສາວຂອງພະຍາເມືອງຕ່າງໆມາເປັນໝູ່ລູກສາວຂອງຕົນເອງເຮັດໃຫ້ພະຍາເມືອງເລົ່ານີ້ມີຄວາມເດືອດຮ້ອນພ້ອມນີ້ກໍໄດ້ສັ່ງນ້ອງທັງສອງຈອບກິນມະນຸດ ຫຼື ຜູ້ທີ່ເຂົ້າມາໃນເມືອງ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**6.4 ສິລະປະການແຕ່ງ** )15 ນາທີ)

**<u>ກິດຈະກາ 3:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ສິລະປະການແຕ່ງເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (25 ນາທີ)

**1. ການໃຊ້ສັບພາສາ**

ການໃຊ້ສັບພາສາ ສ່ວນຫຼາຍແມ່ນຄຳສັບມີຮູບພາບ ແລະ ສັບທີ່ປະຊາຊົນເຄີຍໃຊ້ ອ່ານແລ້ວສາມາດເຂົ້າໃຈໄດ້ພາໃຫ້ບົດເລື່ອງມີຄວາມດູດດື່ມ ແລະ ຈັບອົກຈັບໃຈຕໍ່ຜູ້ອ່ານຜູ້ຟັງເປັນຢ່າງດີ. ແຕ່ຍັງມີບາງສັບເປັບສັບທີ່ເຂົ້າໃຈງ່າຍ, ຕ້ອງໄດ້ສຶກສາ ແລະ ຕີຄວາມມາຍຢ່າງລະອຽດ.

**2. ການວາດພາບທຳມະຊາດ**

ການວາດພາບທຳມະຊາດໃນເລື່ອງສ່ວນຫຼາຍ ແມ່ນພາບໃກ້ສິດຕິດພັນກັບການດຳລົງຊີວິດຂອງປະຊາຊົນ, ເວົ້າເຖິງຄວາມອຸດົມຮັ່ງມີ ແລະ ຄວາມສວຍສົດງົດງາມຂອງປະເທດຊາດເປັນຕົ້ນແມ່ນສັດສາວາສິ່ງ, ຕົ້ນໄມ້ໃບຫຍ້າ, ດອກໄມ້ນາໆພັນ ແລະ ອື່ນໆເປັນສິ່ງກະຕຸ້ນໃຫ້ຄົນເຮົາມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຕົນ.

ຕົວຢ່າງ: ກອນທີ່ວ່າ

...ຫຼາຍຫຼາກລົ້ນ ພັນເພດມາລາ
ບົວບານງາມ ໝື່ນດວງເຫຼືອງເຫຼື້ອມ
ດູຕະການລົ້ນ ຫອມໂຮຍຫົດຮ່ອງ
ຝູງໝູ່ແມງຜູ່ເຜີ້ງ ສະແຫວງກົ້ວກິ່ນລະອອງ... (ກົມວັນນະຄະດີ, 1967).

**3. ການອາດພາບຕົວລະຄອນ**

* ພາບພາຍນອກ (ພັນລະນາຮູບຮ່າງທາງນອກ). ຕົວຢ່າງ: ອາຍຸໄດ້ 15 ຊອນບ່າວ...
* ວາດພາບພາຍໃນ (ແນວຄິດຈິດໃຈ) ຂອງຕົວລະຄອນ ແລະ ອາການຂອງສັດທີ່ມີຕໍ່ນາງແຕງອ່ອນ.

**4. ສີລະປະວັກຕອນ**

ການປະດິດແຕ່ງແຕ່ລະວັກແຕ່ລະຕອນ ແມ່ນໄດ້ສ້າງຄວາມສົນໃຈໃຫ້ແກ່ຜູ້ອ່ານ, ຜູ້ຟັງເປັນເນື່ອງນິດລຽນຕິດ ແລະ ຕໍ່ເນື່ອງໄປ.

**ຈຸດອ່ອນ :** ບາງເທື່ອກໍມີບາງສັບເຂົ້າໃຈຍາກ, ສີລະປະລີລາການແຕ່ງຍັງບໍ່ເປັນໄປຕາມຫຼັກການແຕ່ງກອນ. ບາງບົດຂາດການສຳຜັດເອກ, ໂທ, ບໍ່ເກາະກ່າຍເນື່ອງກັນດີ.

**ສະຫຼຸບ :** ໜັງສືເລື່ອງ ນາງ ແຕງອ່ອນ ເປັນກອນອ່ານທຳມະດາ, ມີຫຼາຍບັ້ນແຕ່ລະບັ້ນມີເນື້ອໃນຕ່າງກັນແລະເພິ່ນໄດ້ຈັດເຂົ້າເປັນໜັງສືເລື່ອງຊາດົກ (ເພາະວ່າມີສິ່ງອັດສະຈັນເກີດຂຶ້ນ ແລະ ສິ່ງສັກສິດມາຊ່ວຍ). ນັກແຕ່ງໄດ້ປະດິດແຕ່ງຕາມທິດສະດີຂອງສາສະໜາ. ຍ້ອນອີງໃສ່ທິດສະດີຂອງສາສະໜາໜັງສືຈຶ່ງມີຈຸດອ່ອນຄ້າງຄາຢູ່. ດ້ານໜຶ່ງກໍອີງໃສ່ທັດສະນະຂອງນັກແຕ່ງ, ແກ້ໄຂຂໍ້ຂັດແຍ້ງຢູ່ໃນສັງຄົມບໍ່ທັນແຈ້ງ ແລະ ຍ້ອນສະ ພາບປະຫວັດສາດເປື່ອຍເຍື່ອຍຈຶ່ງເຮັດໃຫ້ນັກແຕ່ງຖືກຈຳກັດ. ນັກແຕ່ງໄດ້ຊີ້ໃຫ້ພວກເຮົາເຫັນເຫດການຄວາມຈິງທີ່ເກີດຂຶ້ນຢູ່ໃນສັງ ຄົມ. ຍ້ອນສັງຄົມມີຊົນຊັ້ນ, ມີການກົດຂີ່ຂູດຮີດລະຫວ່າງຄົນກັບຄົນຢ່າງໜັກໜ່ວງ, ເຮັດໃຫ້ສັງຄົມກ້ຽວໄປວຽນ ມາຕາມໃຈມັກຂອງພວກເຂົາ, ເຮັດໃຫ້ຜູ້ຢູ່ຕາມສິນກິນຕາມທຳໄດ້ຮັບຄວາມເດືອດຮ້ອນ. ໃນເບື້ອງຕົ້ນແມ່ນບຸກ ຄົນອະທຳໄດ້ຮັບຄວາມສະໜຸກສະໜານຊົ່ວຄາວ.ຕໍ່ມາພວກເຂົາຈຶ່ງຖືກລົງໂທດຢ່າງສະສົມ.

ໜັງສືເລື່ອງ ນາງແຕງອ່ອນ ມີຄຸນຄ່າປະນາມສູງເລື່ອງໜຶ່ງຂອງວັນນະຄະດີສະໄໝນັ້ນ ແລະ ຍັງມີຄຸນຄ່າທາງດ້ານການສຶກສາອົບຮົມເປັນຢ່າງດີ ແລະ ກໍເປັນບົດວັນນະຄະດີທີ່ສ້າງໃຫ້ຄົນມີນໍ້າໃຈມະນຸດສະທຳ, ຄຽດຊັງຄວາມອະທຳຢູ່ໃນສັງຄົມ ແລະ ເຫັນໄດ້ຄວາມປາຖະໜາອັນສູງສົ່ງຂອງມວນຊົນ ເຊິ່ງຍາມໃດກໍຕ້ອງໃຫ້ສິນທຳຊະນະອະທຳຕະຫຼອດໄປ (ສົມທະເພີຍ ສີວົງສັກ ແລະອຳໄພ ສອນທະລາ, 2019).

**III. ຂັ້ນສະຫຼຸບ**

**3. ຄູເນັ້ນຈຸດສຳຄັນຂອງບົດຮຽນ**

- ສະເໜີຕົວລະຄອນສິນທຳ
- ສະເໜີຕົວລະຄອນອະທຳ
- ສີລະປະການປະດິແຕ່ງ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**4. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່

- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກົມວັນນະຄະດີ. (1967). ນິທານນາງແຕງອ່ອນ ເຫຼັ້ມ 2.

ສົມທະເພີຍ ສີວົງສັກ ແລະ ອໍາໄພ ສອນທະລາ. (2019). ວັນນະຄະດີລ້ານຊ້າງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈໍາວິຊາ



ປທ.ສົມທະເພີຍ ສີວົງສັກ